ທກຄຕລ BCEL ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ຮັບສະໝັກເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ...
ກ້າວໄປຂ້າງໜ້າສູ່ຄວາມສໍາເລັດກັບພວກເຮົາ



**ທະນາຄານການຄ້າຕ່າງປະເທດລາວມະຫາຊົນ** ເປັນທະນາຄານທີ່ດໍາເນີນການເຄື່ອນໄຫວວຽກງານພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ, ທະນາຄານແຫ່ງສປປລາວ. ທຄຕລມີຄວາມມຸ່ງໝັ້ນໃນການສ້າງປະໂຫຍດ ແລະອໍານວຍຄວາມສະດວກໃນການເຮັດທຸລະກໍາທາງດ້ານການເງິນ ໃຫ້ແກ່ລູກຄ້າ. ປະຈຸບັນທຄຕລມີ 19 ສາຂາ ແລະຫຼາຍກວ່າ70ໜ່ວຍບໍລິການທົ່ວປະເທດ. ພວກເຮົາມີຄວາມຍິນດີແລະຕ້ອງການເພື່ອນຮ່ວມງານທີ່ຈະປະກອບໃຫ້ສາຂາເພື່ອເຂົ້າມາຮ່ວມສ້າງສາແລະພັດທະນາທຄຕລໃຫ້ມີຄວາມກ້າວໜ້າແລະເຕີບໃຫຍ່ໄປພ້ອມໆກັນ.

**ທຄຕລສາຂາຄໍາມ່ວນຕ້ອງການຮັບພະນັກງານໃໝ່ເພື່ອປະກອບໃຫ້ບັນດາຂະແໜງການພາຍໃນ ຈໍານວນ 04 ຕໍາແໜ່ງ**

---

**ເງື່ອນໄຂຜູ້ສະໝັກ:**

- ✓ ເພດ: ຍິງຫຼືຊາຍອາຍຸບໍ່ເກີນ30ປີ.
- ✓ ມີໃບປະກາດຈົບຊັ້ນສູງຂຶ້ນໄປດ້ານການເງິນ, ການທະນາຄານ, ບັນຊີ, ເສດຖະສາດຫຼືບໍລິຫານທຸລະກິດ.
- ✓ ຄະແນນ CGPA ໂດຍສະເລ່ຍ2.70ຂຶ້ນໄປ.
- ✓ ສາມາດສື່ສານພາສາອັງກິດ (ເວົ້າ, ຂຽນ, ອ່ານ) ໃນລະດັບດີ.
- ✓ ຖ້າສາມາດເວົ້າພາສາຈີນ, ຫວຽດນາມ, ຝຣັ່ງໄດ້ຍິ່ງເປັນການດີ.
- ✓ ຕ້ອງເປັນຄົນທ້ອງຖິ່ນແຂວງຄໍາມ່ວນ ແລະ ແຂວງສະຫວັນນະເຂດ.
- ✓ ມີຄວາມຮູ້ພື້ນຖານການນໍາໃຊ້ຄອມພິວເຕີ (ຖ້າມີໃບຢັ້ງຢືນຍິ່ງເປັນການດີ).

**ຄຸນລັກສະນະຜູ້ສະໝັກ:**

- ✓ ຊື່ສັດບໍລິສຸດ, ມະນຸດສໍາພັນດີ
- ✓ ກົງຕໍ່ເວລາ ແລະມີຄວາມເສຍສະຫຼະສູງ.
- ✓ ມີໃຈຮັກໃນວຽກງານບໍລິການ.
- ✓ ມີຄວາມສາມັກຄີ, ສາມາດເຮັດວຽກເປັນທີມໄດ້.
- ✓ ລະອຽດຮອບຄອບ, ມີລະບຽບວິໄນ ແລະຮັບຜິດຊອບສູງ.
- ✓ ບຸກຄະລິກວ່ອງໄວຫ້າວຫັນ ແລະອົດທົນ .
- ✓ ສາມາດເຮັດວຽກພາຍໃຕ້ຄວາມກົດດັນ.

**ວິທີສະໝັກວຽກ:**

*1)* ຜູ້ທີ່ສົນໃຈສາມາດພົວພັນເຂົ້າຮັບເອກະສານດ້ວຍຕົນເອງໄດ້ທີ່**ຂະແໜງຫ້ອງການ-ບັນຊີ-ໄອທີຂອງທຄຕລສາຂາຄໍາມ່ວນ**.ສອບຖາມຂໍ້ມູນໂທ: **051 212687**.ໂດຍໃຫ້ຖືໃບປະກາດວິຊາສະເພາະ ແລະ ໃບຄະແນນສະບັບຂອງແທ້ມາຢັ້ງຢືນໃນການຂໍຮັບແບບຟອມສະໝັກງານ.

*2)* ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍ-ເອື້ອຍ ແລະພີ່ນ້ອງຂອງຜູ້ສະໝັກງານມາພົວພັນຮັບ-ສົ່ງເອກະສານແທນ.

***ກໍານົດເລີ່ມແຈກ-ຮັບ ເອກະສານສະໝັກຕັ້ງແຕ່ ວັນທີ24/04/2017ຫາວັນທີ31/05/2017.***

ຄໍາມ່ວນ, ວັນທີ18/04/2017

ຫົວໜ້າທະນາຄານການຄ້າຕ່າງປະເທດລາວມະຫາຊົນ

ສາຂາ ຄໍາມ່ວນ

ສາຂາ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ລັດສະໝີ ດາລີງບຸນ